# ບົດທີ 19

# ສັດຕູຂອງອານາຈັກ ພາກປາຍ

<u>ການວິເຄາະຜູ້ທີ່ຕໍ່ສູ້ຈາກນັກສາດສະໜາ</u>

**ເລື່ອງວັນຊາບາໂຕ**




**ເລື່ອງພະຍາມານ**

(ມີຊີ່ຄື ເບເອນເຊບູນ)




**ເລື່ອງໝາຍສຳຄັນ**



**1** ໃຫ້ທ່ານກັບໄປເບິ່ງໜ້າປົກບົດ ທີ 18 ໃນຊ່ອງວ່າງຕໍ່ໄປນີ້ໃຫ້ທ່ານຂຽນຕົວອັກສອນຂອງຮູບທີ່ສະແດງພວກສັດຕູ ຂ້າງຊ້າຍ.

1. ຜູ້ປົກຄອງ ຮູບ ____________________ ແລະ ___________________
2. ປະຊາຊົນ ຮູບ ___________________________________________
3. ນັກສາດສະໜາ ຮູບ ___________________________________________
4. ຍາດພີ່ນ້ອງ ຮູບ ___________________________________________

*ໃນ ບົດທີ 18 ເຮົາໄດ້ຮຽນມາເລື່ອງພວກສັດຕູໝວດທີ 1, 2 ແລະ 4 ຈາກມັດທາຍ ບົດ 11 ແລະ 12 ເຮົາ ບໍ່ໄດ້ສອນເລື່ອງຈຳພວກທີ 3 ໃນ ບົດທີ 18 ນັ້ນ ແຕ່ເຮົາຈະໄດ້ຮຽນໃນ ບົດນີ້ ຜູ້ຕໍ່ສູ້ຈຳພວກທີ 3 ນັ້ນຄື:*

## ການຕໍ່ສູ້ຈາກນັກສາດສະໜາ

**2** ໃຫ້ທ່ານກັບໄປເບິ່ງໜ້າປົກ ບົດທີ 18 ນັ້ນອີກ. ໃນ ຮູບ ໆ ທ່ານຈະເຫັນ 3 ຄວາມຈົດໄວ້ໃນຂອບ 4 ລ່ຽມຂ້າງຊ້າຍ ສາມຄວາມນັ້ນຄື: 3 ຫົວເລື່ອງໃນບົດນີ້. ໃຫ້ທ່ານຈົດ 3 ຫົວເລື່ອງນັ້ນໄວ້. ______________________________________________________________

| |
|---|
| ໃຫ້ທ່ານເປີດພະຄຳພີ ມັດທາຍ ບົດ 12 ໃຫ້ທ່ານຂີດອ້ອມຫົວເລື່ອງກ່ອນ ມັດທາຍ ບົດ 12 ຄື: "ບັນຫາ ເລື່ອງວັນຊະບາໂຕ" ແລະ ກ່ອນ ບົດ 12:22 ອີກຄື "ພະເຢຊູ ກັບເບເອນເຊບູນ" ແລະ ກ່ອນຂໍ້ 38 ທີ່ວ່າ "ຄົນຊາດຊົ່ວຢາກເຫັນໝາຍສຳຄັນ" ທ່ານໄດ້ໝາຍ 3 ຫົວເລື່ອງໄວ້ໃນພະຄຳພີແລ້ວບໍ? |

| |
|---|
| ໃຫ້ທ່ານເປີດຕາຕະລາງສັດຕູຂອງອານາຈັກອີກ ລຸ່ມຫ້ອງ "ດ້ວຍວິທີໃດ" ຂ້າງຫ້ອງ "ຈາກນັກສາດສະໜາ" ຫ້ອງນັ້ນມີເສັ້ນຂີດໄວ້ 3 ເສັ້ນໃຫ້ທ່ານຂຽນຄຳ "ວັນຊະບາໂຕ" "ເບເອນເຊບູນ" ແລະ "ໝາຍ ສຳຄັນ" ໄວ້. ໃນແຖວດຽວກັນລຸ່ມຫ້ອງ "ຜູ້ທີ່ຕໍ່ສູ້" ໃຫ້ຂຽນຄຳວ່າ "ພວກຟາລີຊາຍ" |

## ວັນຊະບາໂຕ

**3** ໃຫ້ທ່ານອ່ານ ມທ 12:1-21 ພວກຄົນຢິວຖືວັນຊະບາໂຕຢ່າງເຄັ່ງຄັດຫຼາຍ ໃນພະບັນຍັດທີ່ໃຫ້ກັບ ໂມເຊ ຂໍ້ທີ 4 ບອກວ່າ "ພວກເຈົ້າຈົ່ງນັບຖືວັນສິນ ໃຫ້ຖືເປັນວັນສັກສິດຂອງພະຜູ້ເປັນເຈົ້າ" ໃຫ້ອ່ານຈາກ ອົບພະຍົບ 31:13-18

ກ. ແມ່ນວັນໃດທີ່ເປັນວັນສັກສິດ? ________________________________

ຂ. ເຂົາບໍ່ຄວນເຮັດຫຍັງໃນວັນສິນນັ້ນ? ____________________________

ຄ. ໃນຂໍ້ 17 ຫຼັງຈາກພະເຈົ້າ ສ້າງຟ້າສະຫວັນແລະແຜ່ນດິນໂລກໃນ 6 ມື້ ວັນທີ 7 ພະອົງເຮັດຫຍັງ? ______________________________________________

**4** ພະອົງປະເຊີນໜ້າກັບພວກຟາລິຊາຍ ເລື່ອງວັນສິນເປັນຕົ້ນ ບັນຫາແຕ່ພວກຟາລິຊາຍຖືພະບັນຍັດທີ່ໃຫ້ ໂມເຊ ກ່ອນນັ້ນຢູ່ ແຕ່ເຂົາມັກເພີ່ມເຕີມຄຳສອນທີ່ຕົກທອດມາຈາກເຖົ້າແກ່ບູຮານຫຼາຍຂໍ້, ຜົນສຸດທ້າຍເຂົາຖືວ່າຄຳສັ່ງຈາກ ພະເຈົ້າໃຫ້ວັນສິນເປັນວັນພັກຜ່ອນ ບໍ່ສຳຄັນປານຄຳສອນອື່ນທີ່ບໍ່ມີປະໂຫຍດນັ້ນ. ສິ່ງທີ່ພະອົງຈະເຮັດນັ້ນບໍ່ໄດ້ຜິດພະບັນຍັດທີ່ໃຫ້ໂມເຊ ແຕ່ພະອົງຕັດສິນໃຈວ່າຈະຊ່ວຍຄົນໃນວັນສິນນັ້ນ ເຖິງພວກຟາລິຊາຍຈະຄຽດກໍ່ຕາມ. ໃນ ບົດ 12 ນີ້ ພວກຟາລິຊາຍຫາຄວາມວ່າ ພະເຢຊູ ຜິດພະບັນຍັດໃນ ສອງຂໍ້ໃດ? ____________

**5** ໃຫ້ທ່ານກັບໄປເບິ່ງໜ້າປົກບົດນີ້ອີກ ພວກຟາລິຊາຍ ຕິເລື່ອງຫຍັງໃນ ຮູບ ກ?

____________________________________________________________

ໃນຮູບ ຂ ເດ? ______________________________________________________

| ໃນຕາຕະລາງເລື່ອງສັດຕູຂອງອານາຈັກລຸ່ມຫ້ອງ "ແລະອື່ກ" ຫ້ອງຊື່ກັບຄຳວ່າ "ວັນຊະບາໂຕ" ໃຫ້ ຂຽນຄຳວ່າ "ເດັດຮວງເຂົ້າມາກິນ" ແລະ "ຊົງໂຜດຄົນມືລີບ" |
|---|

**6** ມີຄຳສອນອື່ນໆທີ່ພວກຟາລິຊາຍຕື່ມໃສ່ພະບັນຍັດຫຼາຍແທ້ ຈົນກວ່າເຂົາບໍ່ສັງເກດເປົ້າໝາຍຂອງພະບັນຍັດ. ພະເຈົ້າ ຕັ້ງວັນສະບາໂຕນັ້ນໄວ້ເພື່ອໃຫ້ຄົນເຮົາເບົາໃຈບໍ່ຕ້ອງເຮັດວຽກ ແຕ່ພວກຟາລິຊາຍຕື່ມຄຳສັ່ງອື່ນໆມາຈົນກວ່າ ວັນສິນນັ້ນມີຂໍ້ບັງຄັບຫຼາຍກວ່າວັນ ອື່ນ ໆ. ພະເຢຊູ ຍົກເຫດຈາກພະຄຳພີເດີມທີ່ຄົນສະໄໝນັ້ນເຂົາເຮັດບໍ່ຖືກກັບຄຳສອນຂອງພວກຟາລິຊາຍຄື:

ກ. ໃນ ມັດທາຍ 12:3-4 ແມ່ນຫຍັງ? ______________________________________

ຂ. ໃນຂໍ້ 5 ເດແມ່ນຫຍັງ? ___________________________________________

**7** ເມື່ອພວກຟາລິຊາຍຂັດຂ້ອງບໍ່ຢາກໃຫ້ ພະເຢຊູ ເຮັດການອັດສະຈັນໃນວັນສິນນັ້ນ ພະອົງກ່າວຕອບເຂົາດ້ວຍຍົກ ຕົວຢ່າງໃດມາ? (ມທ 12:11) ____________________________

**8** ກ. ໃນ ມທ 12:7 ພະເຢຊູ ຕອບພວກຟາລິຊາຍດ້ວຍຄວາມດັ່ງຕໍ່ໄປນີ້ອີກ:
"ຖ້າພວກທ່ານໄດ້ເຂົ້າໃຈຄວາມໝາຍຂອງພະຄຳພີທີ່ວ່າ ເຮົາປະສົງຄວາມ __________ ບໍ່ປະສົງເຄື່ອງ ___________ ທ່ານຄົງຈະບໍ່ກ່າວໂທດໃສ່ຄົນທີ່ບໍ່ມີຄວາມຜິດ" (ຈົ່ງຕື່ມຄວາມທີ່ຂາດ)

ຂ. ພະເຢຊູ ໄດ້ກ່າວອ້າງຂໍ້ພະຄຳພີກ່ອນ ໃນ ມທ 9:13 ເວລານັ້ນພວກຟາລິຊາຍວິຈານວ່າ ພະເຢຊູ ກິນໃນເຮືອນຄົນມີອາຊີບໃດ? ________________________________

ຄ. ເຈົ້າຂອງເຮືອນນັ້ນຊື່ຫຍັງ? ________________________________________

ງ. ພະເຢຊູ ເວົ້າຄວາມຄ້າຍຄືກັນຢູ່ຈ້າຍພູ. ໃນ 2 ໂກລິນໂທ 3:6 ອາຈານໂປໂລບອກວ່າ ແມ່ນຕົວໃດປະ ຫານໃຫ້ຕາຍ? ____________________________________

ຈ. ກົດທີ່ເຄັ່ງຄັດຂອງພວກຟາລິຊາຍກໍ່ຄືກັບຕົວອັກສອນທີ່ປະຫານໃຫ້ເປັນຫຍັງ? ________

ສ. ແຕ່ຄວາມເມດຕາຂອງ ພະເຢຊູ ຂຶ້ນກັບພະວິນຍານທີ່ປະທານໃຫ້ມີຫຍັງ? __________

**9** ຄັນຈະສະຫລຸບຄຳສອນຂອງ ພະເຢຊູ ເລື່ອງວັນຊະບາໂຕ ຄຳຊຽນໃດຕໍ່ໄປນີ້ຈະຖືກກວ່າ? (ເລືອກ)

ກ. ຕ້ອງຖືຈາກທຸກຈຸດຢ່າງລະອຽດທີ່ສຸດ.

ຂ. ບໍ່ຕ້ອງຖືຈັກດີ້.

ຄ. ຈົ່ງຖືໃຫ້ຖືກກັບວິນຍານ ບໍ່ຕາມຕົວອັກສອນ.

**10** ພວກຟາລິຊາຍຖືທຸກຈຸດນ້ອຍຢ່າງເຄັ່ງຄັດ ເຂົາເລີ່ມຕົ້ນວາງແຜນການຈະເຮັດຫຍັງ ໃນ ມທ 12:14? ______

**11** ຄິດເບິ່ງກ່ອນ ພວກຟາລິຊາຍເລີ້ມຕົ້ນວາງແຜນຈະຂ້າ ພະເຢຊູ ເພາະບໍ່ເຂົ້າໃຈເລື່ອງຫຍັງ?

______

**12** ກ. ມັດທາຍ 12:14-16 ເປັນຫຼັກສຳຄັນປະການ ນຶ່ງເພາະໃນເມື່ອນັ້ນພວກຟາລິຊາຍເລີ້ມຕົ້ນຫາເລື່ອງວ່າຈະຂ້າ ພະອົງ ຜົນສຸດທ້າຍເຂົາໄດ້ຂ້າແທ້ດ້ວຍວິທີໃດ?

______

ຂ. ແຕ່ໃນເວລານັ້ນບໍ່ທັນເຖິງກຳນົດທີ່ພະອົງຈະຕາຍເທື່ອ, ພະເຢຊູ ບໍ່ເຄີຍໃຊ້ອຳນາດຝ່າຍພະເຈົ້າ ຕໍ່ສູ້ສັດຕູຈັກ ເທື່ອເພາະໃນ ມັດທາຍ 12:16 ພະອົງຫ້າມຢ່າງໃດ?

______

**13** ໃນ ມທ 12:17-21 ພະເຢຊູ ຍົກຄຳທຳນວາຍຈາກພະຄຳພີເດີມວ່າພະອົງຈະບໍ່ໃຊ້ຄວາມຮຸນແຮງ.

ກ. ແມ່ນຂໍ້ໃດບອກວ່າພະອົງຈະບໍ່ກໍ່ການວິວາດຜິດຖຽງ? ______

ຂ. ແມ່ນຜູ້ໃດຈະບໍ່ຮ້ອງສຽງດັງ? ______

ຄ. ຜູ້ທຳນວາຍຄົນໃດກ່າວຄວາມນີ້? ______

ງ. ບົດໃດ ຂໍ້ໃດແດ່? ______

**14** ຄຳທຳນວາຍຂອງ ເອຊາຢາ ເວົ້າຢ່າງລະອຽດກວ່າ. ເອຊາຢາ ເວົ້າເຖິງຄວາມຮັກແລະຄວາມອ່ອນຫວານ ໃນ ອຊຢ 42:3 ເວົ້າດັ່ງຕໍ່ໄປນີ້:

ກ. "ຕົ້ນອໍ້ທີ່ບວບແລ້ວເພິ່ນຈະບໍ່ ______ ໃສ້ຕະກຽງເປັນຄວັນໃກ້ຈະ ______ ເພິ່ນຈະບໍ່ມອດ. ຈົນກວ່າ ຈະໄດ້ນຳເອົາຄວາມຍຸດຕິທຳໃຫ້ມີໄຊຊະນະ ແລະບັນດາປະຊາຊາດຈະຝາກຄວາມຫວັງໄວ້ກັບນາມຂອງເພິ່ນ" (ຕື່ມຄວາມ)

ຂ. ໃນ ມທ ບົດ 11:4-5 ເຮົາເຫັນພະອົງສະແດງລັກສະນະຢ່າງນັ້ນໂດຍເລົ້າໂລມອອຍໃຈໃຜ? ______

**15** ກ. ມີສອງເທື່ອໃນ ມທ ບົດ 12 ທີ່ພວກຟາລິຊາຍຫາຄວາມວ່າ ພະເຢຊູ ຜິດຕໍ່ວັນໃດ? ____

ຂ. ເທື່ອທຳອິດເຂົາຕິລູກສິດຂອງພະອົງ ເພາະເຂົາເດັດຫຍັງມາກິນໃນວັນຊະບາໂຕ? ____

ຄ. ແຕ່ ພະເຢຊູ ຍົກຕົວຢ່າງຈາກພະຄຳພີເດີມຄືກະສັດໃດ? ______

ງ. ແລະພວກໃດອີກ? ______________________________________________
ຈ. ເທື່ອທີສອງແມ່ນພວກໃດຕິພະອົງ? ______________________________
ສ. ຕິເພາະພະເຢຊູ ເຮັດຫຍັງໃນວັນສະບາໂຕ? _________________________
ຊ. ພະເຢຊູ ຍົກຕົວຢ່າງຈາກສັດຊະນິດໃດ? ___________________________
ຍ. ນຕົວຢ່າງນັ້ນສັດຕົກຢູ່ໃສ? __________________________________
ດ. ຕົກໃນວັນໃດ? _____________________________________________
ຕ. ດັ່ງນັ້ນຖ້າຈະຖືວັນສະບາໂຕສົມຄວນຈະຖືຕາມວິນຍານຊຶ່ງນໍາແທນທີ່ຈະຖືຕາມຕົວໃດ?

_____________________________________________________________

ຖ. ຕໍ່ໄປພວກຟາລີຊາຍອອກໄປປຶກສາຫາລືກັນວ່າຈະເຮັດຢ່າງໃດກັບພະອົງ? _________
ທ. ເຫດທີ່ເກີດມີເລື່ອງນັ້ນຄືເຂົາບໍ່ຖືກໃຈກັນເລື່ອງວັນໃດ? ___________________
ນ. ພະອົງອອກໄປຈາກທີ່ນັ້ນແລ້ວຫ້າມພວກສິດບໍ່ໃຫ້ເປີດເຜີຍພະນາມຂອງພະອົງເພາະພະອົງບໍ່ຍອມໃຊ້ອໍາ ນາດພະເຈົ້າຕໍ່ສູ້ເຂົາ ພະອົງຈະບໍ່ໃຊ້ຄວາມໃດ? ______________
ບ. ການນັ້ນສະແດງລັກສະນະຂອງພະອົງທີ່ທໍານວາຍໄວ້ໃນພະທໍາເອຊາຢາບົດໃດຂໍ້ໃດ?

_____________________________________________________________

*ມີຢູ່ບາງເທື່ອທີ່ຄຼິດສະຕຽນໃນບ່ອນໜຶ່ງບ່ອນໃດ ຖືຕ່າງກັບຄຼິດສະຕຽນໃນແຂວງອື່ນໆ ເຂົາຈະຄຽດກັນກໍ່ມີ ເຂົາອາດຈະແຕ່ງການລ້ຽງແຕກຕ່າງກັບເຮົາ ຫຼື ເຮັດພິທີ ຕ່າງ ໆ ອາດຈະບໍ່ເນັ້ນຄໍາການປະຕິບັດຢ່າງດຽວກັບເຮົາ. ທີ່ຈິງການປະຕິບັດຊີວິດຄຼິດສະຕຽນຕັ້ງຕົ້ນດ້ວຍຄວາມຮັກ ເພາະສະນັ້ນຈົ່ງຄຶດເຖິງຄວາມຮັກກ່ອນສິ່ງອື່ນໃດຖ້າຈະບັງຄັບຄົນອື່ນໃຫ້ເຮັດຕາມໃຈເຮົາກໍ່ຄວນເບິ່ງຕາມຄວາມເໝາະສົມ.*

## ເລື່ອງພະຍາມານ ຕອບ:

**16** ໃຫ້ອ່ານ ມັດທາຍ 12:22-37 ທີ່ພວກຟາລີຊາຍຫາຄວາມໃສ່ ພະເຢຊູ ຍິ່ງໜັກກວ່າເທື່ອກ່ອນ.
ກ. ໃນ ມທ 12:24 ເຂົາຫາຄວາມວ່າຢ່າງໃດ?_______________________________
ຂ. ພະເຢຊູ ເຮັດຫຍັງກ່ອນທີ່ເຂົາຈະຫາຄວາມໃສ່ຢ່າງນັ້ນ? ___________________

**17** ພະເຢຊູ ຕອບຄວາມຕົວະຂອງເຂົາໂດຍເລົ່າເລື່ອງອານາຈັກຂອງ ພະເຈົ້າ
ກ. ໃນ ມທ 12:28 ການທີ່ພະອົງຂັບໄລ່ຜີອອກດ້ວຍພະວິນຍານຂອງ ພະເຈົ້າ ແມ່ນເປັນຫຼັກຖານວ່າອານາຈັກ ໃດ ມາເຖິງແລ້ວ? ________________________________
ຂ. ໃນ ມທ 12:26 ຖ້າຊາຕານຈະຂັບໄລ່ ຊາຕານ ອອກຈະເປັນຢ່າງໃດໃນຕົນເອງ? _____

**18** ຄໍາວ່າ “ອານາຈັກ” ປາກົດມາຈັກເທື່ອໃນ ມທ 12:25-28? ____________________

| ໃຫ້ທ່ານເອົາສໍສີແດງຂີດກ້ອງຄໍາ “ອານາຈັກ” ໃນ ມທ 12:25-26 ແລະ 28 |
|---|

**19** ໃນ ຂໍ້ 29 ຄົນແຂງແຮງປຽບພະຍາມານ ແມ່ນແຕ່ວິນຍານໃດ ທີ່ຈະຂັບໄລ່ພະຍາມານໄດ້?
(ຂໍ້ 28) ______________________________________________________

*ຂໍໃຫ້ທ່ານຕັ້ງໃຈສັງເກດຄຳອຸປະມານ້ອຍໃນ ມທ 12:43-45 ທີ່ຊີ້ບອກວ່າ ຕົວເຮົາເອງຂັບໄລ່ຜີອອກບໍ່ໄດ້.*

**20** ໃຫ້ອ່ານ ມທ 12:43-45 ດີ ໆ

ກ. ຄົນໃດທີ່ພະຍາຍາມຊຳລະຕົວເອງໄດ້ນອກຈາກພະວິນຍານບໍລິສຸດຈະເປັນຢ່າງໃດ?

______________________________________________________________

ຂ. ໜ້າປົກບົດນີ້ ແມ່ນຮູບໃດສະແດງເລື່ອງເຫດການນີ້? ________________________

ຄ. ໃນ ມທ 12:28 ມີແຕ່ວິທີດຽວທີ່ພະຍາມານບໍ່ມີສິດກັບເຂົ້າໄປບັງຄັບໃຈເຮົາຄືດ້ວຍວິທີໃດ?

______________________________________________________________

**21** ຜູ້ໃດທີ່ໄດ້ຮັບເອົາພະວິນຍານຂອງ ພະເຈົ້າ ແລ້ວ ຄັນຜີຮ້າຍກັບມາຫາຄົນນັ້ນແລ້ວເຫັນວ່າກວາດສະອາດດີ ແຕ່ ຍິ່ງກວ່ານັ້ນອີກມີຜູ້ປະຈຳຄື ພະວິນຍານຂອງ ພະເຈົ້າ ແລ້ວ.

ກ. ຈິດໃຈຂອງຄົນທີ່ເຊື່ອບໍ່ຫວ່າງເປົ່າແລ້ວ ເພາະຜູ້ໃດຢູ່ຂ້າງໃນ? (ໂລມ 8:9) __________

ຂ. ຜີນັ້ນອາດຈະມາລົບກວນຄຶດສະຕຽນຢູ່ ແຕ່ຖ້າວ່າມີ ພະວິນຍານຂອງ ພະເຈົ້າ ຢູ່ ຜີນັ້ນຈະເຂົ້າໄດ້ບໍ່? _____________________________________________

ຄ. ຜີມີສິດເຂົ້າໄປປົກຄອງຈິດໃຈຂອງຄົນຢ່າງໃດ? ____________________________

ງ. ຄຳອຸປະມານ້ອຍເລື່ອງນີ້ເຫັນໃນ ມັດທາຍ ບົດໃດ ຂໍ້ໃດ? ______________________

**22** ກ. ພວກເຮົາສົມຄວນຈະຂອບໃຈ ພະເຈົ້າ ວ່າພະຍາມານບໍ່ມີສິດຈະບັງຄັບເຮົາໄດ້ເພາະສິດນັ້ນຢູ່ກັບໃຜ? _____________________________________________

ຂ. ດັ່ງນັ້ນເຮົາຈຶ່ງຂໍຈາກ ພະເຈົ້າ ຢູ່ສະເໝີໃຫ້ເຮົາເຕັມໄປດ້ວຍວິນຍານໃດ ເພື່ອພະຍາມານຈະບໍ່ມີສິດກັບເຮົາ?_________________________________________________

> ໃນຕາຕະລາງ ຂ້າງຄຳທີ່ວ່າ "ພະຍາມານ" ລຸ່ມຫ້ອງ "ແລະອີກ" ໃຫ້ຂຽນ:
>
> ກ. ຄຳອຸປະມານ້ອຍ ມທ 12:43-45
>
> ຂ. ຫວ່າງເປົ່າ - ພະຍາມານຖືກມັດໄວ້

**23** ນັ້ນແຫຼະ! ຄືສ່ວນອ່ອນແອຂອງພວກຟາລິຊາຍ (ແລະຫຼາຍຄົນໃນສະໄໝນີ້ດ້ວຍ) ພວກຟາລິຊາຍບໍ່ເຂົ້າຮ່ວມ ກັບການກະທຳບາບຫຼາຍຢ່າງຄື: ການຫຼິ້ນຊູ້ ການລັກ ການຂ້າຄົນ ໆລໆ ເຂົາມັກຖືວ່າເຂົາຊຳລະຕົວບໍ່ມີບາບ ບັນຫາແຕ່ເຂົາບໍ່ມີວິນຍານຂອງ ພະເຈົ້າ ປະຈຳເພາະສະນັ້ນພະຍາມານແຕ່ງຕົວໃນຮູບຮ່າງທີ່ຖືກກັບສາດສະໜາ. ດັ່ງນັ້ນຜີເຫຼົ່ານັ້ນກັບມາໂດຍບາບອື່ນໆຄື: ຄວາມອິດສາ ຄວາມຈອງຫອງຄວາມຄຽດ ໆລໆ

ກ. ໃນ ມທ 12:34 ພະເຢຊູ ຍົກຄວາມປຽບທຽບເລື່ອງໃດກ່ຽວກັບພວກຟາລິຊາຍ? _______

ຂ. ມີຜູ້ປະກາດພະທຳອີກຄົນໜຶ່ງທີ່ໃຊ້ຄວາມດຽວນັ້ນຄືໃຜ? ______________________

ຄ. ຄວາມນັ້ນເຫັນໃນ ມທ ບົດໃດ ຂໍ້ໃດ? _____________________________________

**24** ໃຫ້ອ່ານ ມັດທາຍ 3:7-11 ທັງ ພະເຢຊູ ແລະ ໂຢຮັນບັບຕິສະໂຕ ທັງສອງເຄີຍເທດສະໜາກ່ຽວກັບເຫດການ 3 ປະການໃດຕໍ່ໄປນີ້? (ເລືອກ)

ກ. ເລື່ອງພະວິນຍານ. ຂ. ເວົ້າວ່າພວກຟາລິຊາຍເໝືອນຢ່າງກັບງູ.

ຄ. ຊົງໂຜດຄົນຂີ້ທູດ. ງ. ຊົງເອີ້ນເອົາ ມັດທາຍ.

ຈ. ຕົ້ນໄມ້ແລະຜົນຂອງມັນ.

**25** ໃຫ້ອ່ານ ມທ 12:31 ດີ ໆ

ກ. ແມ່ນບາບໃດທີ່ ພະເຈົ້າຈະໂຜດອະໄພໃຫ້ບໍ່ໄດ້? ___________________________

ຂ. ແມ່ນພວກໃດທີ່ຈວນຈະກະທຳບາບນັ້ນ? __________________________________

ຄ. ຄວາມໝິ່ນປະມາດພະວິນຍານນັ້ນ ປະກົດວ່າແມ່ນການສັງເກດພະລາຊະກິດຂອງ ພະວິນຍານແລ້ວໃສ່ ຮ້າຍວ່າເປັນຂອງພະຍາມານ. ພວກຟາລິຊາຍກ່າວຫາວ່າ ພະເຢຊູ ໄລ່ຜີອອກດ້ວຍອຳນາດໃຜ? ______________________________________________

*ສາດສະດາຈານຜູ້ຮຽນຮູ້ພະຄຳພີສ່ວນຫຼາຍເຂົ້າໃຈກັນວ່າ ບາບໝິ່ນປະ ມາດພະວິນຍານນັ້ນໝາຍເຖິງການປະຕິເສດກິດຈະການຂອງພະວິນຍານ ໃນຊີວິດຂອງມະນຸດເຮົາ. ການປະຕິເສດນັ້ນຄື: ໂດຍເຈດຕະນາແລະໂດຍຕັ້ງສະຕິດີອີກ. ຄົນທີ່ເລືອກເຮັດຢ່າງນັ້ນບໍ່ຍອມຮັບຮູ້ອັນໃດດີ ແລະ ອັນໃດຊົ່ວ. ອັນໃດທີ່ດີ ເພິ່ນຈະວ່າຊົ່ວ ແລະ ອັນໃດຊົ່ວເພິ່ນຈະວ່າດີ. (ອາໂມດ 5:7) ຄົນທີ່ບໍ່ຮັບຮູ້ວ່າອັນໃດຊົ່ວອັນໃດດີ ຈະບໍ່ຖິ້ມໃຈເກົ່າເອົາໃຈໃໝ່ຈັກເທື່ອເພາະເພິ່ນບໍ່ຮັບຮູ້ ຜິດ ດັ່ງນັ້ນບໍ່ເຫັນເຫດທີ່ຈະປະຄວາມຜິດນັ້ນ ແມ່ນເພິ່ນບໍ່ຮັບຄວາມຜິດຈຶ່ງບໍ່ເຫັນເຫດທີ່ຈະປະຄວາມຜິດນັ້ນຈຶ່ງບໍ່ຖິ້ມໃຈເກົ່າເອົາໃຈໃໝ່ຈັກເທື່ອ.*

*ແຕ່ຂໍໃຫ້ທ່ານຜູ້ຮຽນສັງເກດວ່າ ຄົນໃດທີ່ຢ້ານເລື່ອງນັ້ນຍັງຮັບຮູ້ບາບເລີຍປາກົດວ່າຜູ້ນັ້ນບໍ່ໄດ້ປະມາດພະວິນຍານເທື່ອ. ຄວາມຢ້ານນັ້ນຄືຫຼັກຖານວ່າ ເພິ່ນຍັງຮັບຮູ້ຜິດຢູ່ ຄົນໃດທີ່ຜິດຢ່າງທີ່ ພະເຈົ້າຈະບໍ່ອະໄພໃຫ້ຄົນນັ້ນຈະບໍ່ຮູ້ຜິດ ຈະບໍ່ຮູ້ຢ້ານພະເຈົ້າເລີຍ ຄົນຢ່າງນັ້ນຈະບໍ່ສຳນຶກຜິດ.*

## ໝາຍສຳຄັນ

**26** ໃຫ້ອ່ານ ມັດທາຍ 12:38-42 ແລ້ວຕື່ມຄວາມທີ່ຂາດຕໍ່ໄປນີ້.

ກ. ພວກນັກທຳແລະພວກ ______________________________________________

ມາເວົ້າກັບພະເຢຊູ ເປັນເທື່ອທີ 3 ວ່າເຂົາຢາກເຫັນ _________________________

ຂ. ການນີ້ຄ້າຍຄືກັບການທົດລອງ ພະເຢຊູ ໃນມັດທາຍ ບົດ 4 ການທົດລອງຈາກພວກຟາລິຊາຍໃນ ບົດ 12 ປຽບເໝືອນກັນກັບການທົດລອງປະການໃດ? (ເລືອກ)

_______ ຢູ່ປ່າ. _______ ຢູ່ຫຼັງຄາພະວິຫານ. _______ ຢູ່ພູສູງ.

**27** ພະເຢຊູ ຕອບເຂົາໂດຍຄວາມປຽບທຽບຈາກພະຄຳພີເດີມເລື່ອງ ໂຢນາ ມີປາໃຫຍ່ກືນເພິ່ນລົງ ແລະອີກ 3 ມື້ຄາຍເພິ່ນອອກໃສ່ແຄມຝັ່ງອີກ. ເຫດການນັ້ນປາກົດໃນພະຄຳພີເດີມ ຊີ້ເຫັ້ນນັ້ນວ່າແນວໃດ? ___________________________________________________

*ເລື່ອງນັ້ນເປັນຕາສົນໃຈ ຢູ່ໃນພະຄຳພີເດີມໜ້າ 1117 ຖ້າທ່ານມີເວລາອ່ານເບິ່ງກໍ່ອາດຈະ ຊ່ວຍໃຫ້ທ່ານເຂົ້າໃນເລື່ອງທີ່ ພະເຢຊູ ເວົ້ານັ້ນ.*

**28** ໃຫ້ອ່ານ ມັດທາຍ 12:40 ພະເຢຊູ ຍົກເລື່ອງຂອງ ໂຢນາ ມາປຽບທຽບຫຍັງ? (ເລືອກ)

ກ. ການຄືນພະຊົນຂອງພະອົງຫຼັງຈາກສາມວັນ.

ຂ. ທີ່ ພະເຢຊູ ຍົກລູກສາວເຈົ້ານາຍຄືນຂຶ້ນມາຈາກຕາຍ.

ຄ. ທີ່ ພະເຢຊູ ຖືກທົດລອງມາແລ້ວ 3 ເທື່ອ

ງ. ຕົເອກອະນຸພາບ.

**29** ແຕ່ກ່ອນໃນເມື່ອ ພະເຢຊູ ເທດສະໜາຢູ່ນາຊາເລັດ ພະອົງອ້າງເຖິງຄົນຕ່າງປະເທດທີ່ເປັນຕົວຢ່າງໃນຄວາມ ເຊື່ອ. ອີກເທື່ອໜຶ່ງ ພະອົງອ້າງເຖິງຄົນຕ່າງປະເທດທີ່ມີຄວາມເຊື່ອ. ໃຫ້ອ່ານ ມັດທາຍ 12:41-42 ຄົນຕ່າງປະເທດນັ້ນຄື:

ກ. ໄທເມືອງໃດ? ______________________________________________

ຂ. ນາງກະສັດຝ່າຍທິດໃດ? ______________________________________

**30** ເມືອງນີນາເວ ຄືນະຄອນຫຼວງຂອງຈັກກະພັດອັດຊີເລຍ ພວກອັດຊີເລຍນັ້ນໄດ້ຍຶດດິນຂອງຕະກຸນ ເຊບູໂລນ ແລະເນບທາລີ ໃນສະໄໝຂອງຜູ້ທຳນວາຍ ເອຊາຢາ ນັ້ນແລະເປັນເຫດທີ່ເຂົາເອີ້ນຊື່ດິນຂອງສອງຕະກຸນນັ້ນວ່າຫຍັງ? (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ຄາລີເລ ບ່ອນຊາວ ____________________________ ອາໄສຢູ່.

ຂ. ນະຄອນຫຼວງຂອງຈັກກະພັດອັດຊີເລຍຊົ່ວຮ້າຍຫຼາຍ ແຕ່ຜົນສຸດທ້າຍເມືອງ _________ ນັ້ນຖິ້ມ ໃຈເກົ່າເອົາໃຈໃໝ່ແລ້ວ.

ຄ. ຜູ້ປະກາດພະທຳໃນເມືອງນັ້ນຊື່ວ່າ ___________________________________

ງ. ນາງກະສັດຝ່າຍທິດໃຕ້ຢູ່ໃນຍຸກດຽວກັບບຸດຂອງດາວິດທີ່ເປັນກະສັດເພິ່ນຊື່ _________

ຈ. ນາງກະສັດຝ່າຍທິດໃຕ້ປົກຄອງໃນທະວີບອາຟາລິກາໃກ້ໆກັບປະເທດ ເອຢິບ. ໃນສະໄໝນັ້ນນາງກະສັດ ເດີນທາງມາໄກເຖິງເຢລູຊາເລັມ ເພື່ອເຫັນຜູ້ທີ່ ພະເຈົ້າ ປະທານໃຫ້ມີປັນຍາຄື: ______________________________________________________

**31** ໃນຕົວຢ່າງຜູ້ທີ່ມີຄວາມເຊື່ອ (ນາງກະສັດຝ່າຍທິດໃຕ້ ຫຼື ໄທເມືອງນີນາເວ)

ກ. ໃຜຢູ່ໃນປະເທດທາງທິດໃຕ້ຈາກປາແລັດສະຕິນ? _________________________

ຂ. ໃຜຢູ່ທາງທິດຕາເວັນອອກສຽງເໜືອຈາກປາແລັດສະຕິນ? ___________________

ຄ. ໃຜຟັງຄວາມຂອງກະສັດຊາໂລໂມນ? __________________________________

ງ. ໃຜຟັງຄວາມຂອງ ໂຢນາ? _________________________________________

ຈ. ຜູ້ປະກາດພະທຳໄປຫາພວກໃດ? ____________________________________

ສ. ໃຜມາຫາກະສັດຊາໂລໂມນ? _______________________________________

**32** ກ.ນາງກະສັດຝ່າຍທິດໃຕ້ຟັງພະຄຳຂອງ ພະເຈົ້າ ຈາກໃຜ? _____________________

ຂ.ໄທນີນາເວຟັງພະຄຳຂອງ ພະເຈົ້າ ຈາກໃຜ? ______________________________

**33** ໃຫ້ທ່ານເບິ່ງຮູບໜ້າປົກບົດນີ້: ຮູບ ໆ ສະແດງເຖິງໃຜ? __________________________
ແລະ ຮູບ ຈ ສະແດງເຖິງໃຜ? ____________________________________________

**34** ໃນສອງຄົນນັ້ນແມ່ນຜູ້ໃດປຽບທຽບກັບພະເຢຊູ ທີ່ຕາຍແລ້ວອີກ 3 ມື້ເປັນຄືນຂຶ້ນມາ? _____

**35** ນີນາເວເປັນນະຄອນຫຼວງຂອງຈັກກະພັດໃດ? ________________________________

| |
|---|
| ໃນຕາຕະລາງເລື່ອງສັດຕູຂອງອານາຈັກລຸ່ມແຖວ "ແລະອີກ" ແຖວ 3 "ຈາກນັກສາດສະໜາ" ຂ້າງ "ໝາຍສຳຄັນ" ໃຫ້ທ່ານຂຽນຄຳ "ຊາໂລໂມມ ມາຍັງ ນາງກະສັດໃຕ້" ແລະ "ໂຢນາ ມາຍັງ ໄທນີນາເວ" |

**36** ເຖິງວ່າມີຄົນຕໍ່ສູ້ປານໃດກໍ່ຕາມ ພະເຢຊູ ອ້າງຢູ່ສະເໝີວ່າ ພະອົງຢູ່ເໜືອກວ່າທຸກສິ່ງຄື:
ກ. ໃນ ມັດທາຍ 12:6 ພະອົງໃຫຍ່ກວ່າຫຍັງ? ______________________________
ຂ. ໃນ ມັດທາຍ 12:8 ພະອົງເປັນເຈົ້າຂອງວັນໃດ? ___________________________
ຄ. ໃນ ມັດທາຍ 12:41 ພະອົງໃຫຍ່ກວ່າໃຜ? ______________________________
ງ. ໃນ ມັດທາຍ 12:42 ພະອົງໃຫຍ່ກວ່າໃຜ? ______________________________

**37** ຄົນທຳມະດາຈະບໍ່ອ້າງເຖິງຄວາມຢ່າງນັ້ນຈັກເທື່ອພະອົງບໍ່ໄດ້ເສຍຈິດດອກ ຖ້າວ່າພະອົງອ້າງໄປຢ່າງນັ້ນປາກົດ ວ່າເປັນຄວາມຈິງແທ້ ຄືເປັນຫຼັກຖານວ່າ ພະເຢຊູ ເປັນທັງມະນຸດ ແລະ ______________ ດ້ວຍ. (ຕື່ມຄວາມີ້ຂາດ)

*ທ່ານເອງເຄີຍພົບການຂົ່ມເຫັງ ຫຼື ຜູ້ຕໍ່ສູ້ເພາະທ່ານເປັນຄຣິດສະຕຽນບໍ່? ທ່ານທົນໄດ້ບໍ່? ພະເຢຊູ ມີຄຳແນະນຳສະເພາະເພື່ອການນັ້ນ ແຕ່ຄວາມນັ້ນບໍ່ຢູ່ໃນ ບົດ 12 ໃຫ້ທ່ານເປີດເບິ່ງໃນ ມັດທາຍ 11:25-30*

**38** ຂໍໃຫ້ທ່ານອ່ານ ມທ 11:25-30 ນັ້ນ ແລ້ວໃຫ້ທ່ານຈົ່ງຈື່ໄວ້ວ່າ ພະເຢຊູ ກ່າວຄຳເລົ່ານັ້ນໃນເມື່ອພຶດຕິການທີ່ມີຜູ້ ຂົ່ມເຫັງພະອົງຢູ່ແລະການຂົ່ມເຫັງນັ້ນບໍ່ນ້ອຍ. ເພື່ອໃຫ້ທ່ານຈື່ໄດ້ງ່າຍກວ່າໃຫ້ທ່ານຂຽນຄຳທີ່ຂາດໃນຕາຕະລາງຕໍ່ໄປນີ້:

| | | | | |
|---|---|---|---|---|
| | | | | *ບົດ ແລະ ຂໍ້* |
| 1. ______________ | ຕໍ່ສູ້ | | ໃນ ມທ | __________ |
| 2. ______________ | ຕໍ່ສູ້ | | ໃນ ມທ | __________ |
| | | ວັນ ____________ | | |
| 3. ______________ | ຕໍ່ສູ້ ເລື່ອງ: | ເບ ____________ | ໃນ ມທ | __________ |
| | | ໝາຍ __________ | | |
| 4. ______________ | ຕໍ່ສູ້ | | ໃນ ມທ | __________ |

**39** ສະຖານະການໃນສະໄໝນັ້ນຮ້າຍຫຼາຍ

ກ. ແມ່ນກະສັດເຮໂລດໃດທີ່ຂູ່ເຂັນພະອົງ? ________________________________

ຂ. ໄທເມືອງນາຊາເລັດ ແລະ ອີກ 3 ເມືອງໃດບໍ່ຮັບພະອົງ? ______________________

______________________________ ______________________________

ຄ. ແມ່ນນັກສາດສະໜາພວກໃດເປັນຕົ້ນທີ່ຕໍ່ສູ້ພະອົງ? _________________________

ງ. ເຂົາວາງແຜນວ່າຈະເຮັດຫຍັງກັບພະອົງ? ________________________________

ຈ. ຍິ່ງກວ່ານັ້ນ ພວກຍາດພີ່ນ້ອງຂອງພະອົງຄິດໃດ ຈະມາເອົາພະອົງໄປ? ___________

____________________________________________________________

**40** ການກະທຳໃນສະໄໝນັ້ນຄືຮ້າຍແທ້ ແຕ່ພະອົງບໍ່ໄດ້ຈົ່ມເລື່ອງຄົນທີ່ຕໍ່ສູ້ນັ້ນ.
ພະເຢຊູ ອ້ອນວອນແລະສັນລະ ເສີນໃຜ? ________________________________

**41** ກ. ພະເຢຊູ ສັນລະເສີນ ພະເຈົ້າ ເພາະພະອົງຊົງປິດບັງສິ່ງເຫຼົ່ານີ້ໄວ້ຈາກຜູ້ມີປັນຍາແລະຜູ້ສະຫຼາດ ແຕ່ໄດ້ຊົງສະ ແດງໃຫ້ໃຜຮູ້? ____________________________________

ໝາຍຄວາມວ່າ ພະເຈົ້າ ຊົງເປີດເຜີຍໃຫ້ປະຊາຊົນທຳມະດາຮູ້ແລ້ວ

ຂ. ໃນ ມັດທາຍ 11:29 ພະເຢຊູ ບອກວ່າ “ເຮົາເປັນຜູ້ໃຈ __________________ ແລະ
_____________” (ຕື່ມຄວາມທີ່ຂາດ)

**42** ທີ່ພະເຢຊູເທດສະໜາຢູ່ຈ້າຍພູໃນມັດທາຍ 5:11-12 ເຮົາຈະເປັນສຸກແລະຊົມຊື່ນຍິນດີໃນເມື່ອໃດ? ____________________________________________________________

**43** ໃຫ້ອ່ານ ກິດຈະການ 16:25

ກ. ໃນເມື່ອເວລາ ໂປໂລ ແລະ ຊີລາຖືກຂັງໄວ້ໃນຄຸກເຂົາເຮັດຕາມຕົວຢ່າງຂອງພະອົງດ້ວຍ ເຮັດຫຍັງ? ____________________________________________

ຂ. ເພື່ອບໍ່ໃຫ້ເຮົາທຸກໃຈ ເພາະການຂົ່ມເຫັງຈາກຜູ້ຕໍ່ສູ້ ບໍ່ວ່າຈາກຝ່າຍໃດກໍ່ຕາມເຮົາຄວນຈະ ເຮັດເໝືອນຢ່າງ ກັບພະເຢຊູ ໂປໂລ ແລະ ຊີລາ ເຂົາເຮັດຫຍັງ? ______________

*ຄັນຖ້າວ່າ ການຂົ່ມເຫັງຈາກຜູ້ຕໍ່ສູ້ເຮົາປຽບເໝືອນຢາພິດທີ່ເຮັດໃຫ້ເຮົາເສົ້າໃຈ ການສັນລະເສີນ ພະເຈົ້າ ປຽບຄືກັບຢາແກ້ພິດນັ້ນ. ເທື່ອໃດທີ່ທ່ານສຳນຶກເຈັບໃຈເພາະມີຜູ້ບໍ່ຮັບຟັງຫຼືຕໍ່ສູ້ ເຮົາຈົ່ງຊອກຫາເຫດຫຼາຍຢ່າງທີ່ຈະຂອບໃຈພະອົງແລ້ວສັນລະເສີນພະອົງຢ່າງດຽວກັນກັບ ພະເຢຊູ ໂປໂລ ແລະ ຊີລາ ຈົ່ງຈະບໍ່ເສົ້າໃຈໄປ. ໃຫ້ທ່ານຈົດເຫດຜົນຫຼາຍປະການທີ່ທ່ານສົມຄວນຈະສັນລະເສີນ ພະເຈົ້າ ຢູ່ສະເໝີໃສ່ເຈັ້ຍ.*

**44** ກ. ຖ້າເວລາໃດທີ່ເຮົາເສົ້າໃຈເພາະມີຄົນຂົ່ມເຫັງແລະຕໍ່ສູ້ເຮົາ,ເຮົາຈະແກ້ຄວາມເສົ້າໃຈນັ້ນ ດ້ວຍການເຮັດຫຍັງ?____________________________________________

ຂ. ນອກຈາກການສັນລະເສີນໃນ ມທ 11:29-30 ຍັງຍົກຄວາມປຽບທຽບມາອີກປະການໜຶ່ງຄື ແອກ. ສ່ວນຄົນ ທີ່ເຮັດການໜັກແລະແບກພາລະໜັກ ສ່ວນຄົນທີ່ເສົ້າໃຈແລະຖືກການຂົ່ມເຫັງພະອົງສະເໜີໃຫ້ມີແອກທີ່ພໍເໝາະແລະເບົາ. ພະອົງຈະໃຫ້ເຊົາເມື່ອຍ "ແອກ" ຂອງພະອົງນັ້ນປຽບເໝືອນຫຍັງ? (ເລືອກ)

______ ການພັກຜ່ອນ. ______ ຄວາມຂີ້ຄ້ານ

______ ການຮັບໃຊ້ພະອົງ. ______ ຄວາມເສົ້າໃຈ.

**45** ກ. "ແອກ" ນັ້ນປຽບເໝືອນການເຮັດຫຍັງ? ________________________________

ທຳມະດາ "ແອກ" ນັ້ນຈະບໍ່ເບົາຈັກເທື່ອ ແຕ່ "ແອກ" ນັ້ນແມ່ນເປັນສິ່ງທີ່ ພະເຢຊູ ໃຊ້ໃຫ້ ທຸກຄົນໃນໂລກຮັບໃຊ້ຢ່າງໜຶ່ງ ຢ່າງໃດ. ບາງຄົນຢູ່ໃຕ້ອຳນາດຂອງເຫຼົ້າ ບາງຄົນຢູ່ໃຕ້ອຳນາດຕັນຫາແຕ່ຄົນໃດທີ່ຍອມ ມອບຕົວຢູ່ ໃຕ້ອຳນາດຂອງພະເຢຊູ ຄົນນັ້ນຢູ່ໃຕ້ອຳນາດທີ່ປະກອບດ້ວຍຄວາມຮັກແລະຄວາມອ່ອນສຸພາບ. ສະເພາະໃນ ມທ 11:30 ພະອົງບອກວ່າ

ຂ. "ແອກຂອງເຮົາກໍ່ພໍ _________ ແລະພາລະຂອງເຮົາກໍ່ _________" (ຕື່ມຄວາມທີ່ຂາດ)

**46** ໃນ ມັດທາຍ 11:28 ຜູ້ທີ່ເຮັດວຽກໜັກໜ່ວງແລະແບກພາລະໜັກ ຄົນນັ້ນຈະຮັບຄວາມເຊົາເມື່ອຍໂດຍມາຫາ ໃຜ? ____________________________________________

**47** ດັ່ງນັ້ນຖ້າຜູ້ໃດເສົ້າໃຈເພາະມີຄົນຕໍ່ສູ້ອານາຈັກສະຫວັນ ສົມຄວນຈະເຮັດຕາມບາດກ້າວສອງປະການໃດ? (ເລືອກ)

ກ. ແຕ່ງການລ້ຽງໄວ້ເພື່ອລືດສະຕຽນ. ຂ. ສັນລະເສີນ ພະເຈົ້າ

ຄ. ໜີໄປບ່ອນອື່ນຄາວໜຶ່ງ ງ. ມອບຕົວໄວ້ຮັບໃຊ້ພະອົງ

| |
|---|
| ມັດທາຍ 11:28 ຄືຄວາມສັນຍາຂອງພະອົງທີ່ໜູນໃຈເຮົາຢ່າງຫຼາຍທີ່ສຸດໃນເມື່ອທີ່ເຮົາທຸກຍາກເພາະຄົນມາຕໍ່ສູ້. ໃຫ້ທ່ານຂຽນຄຳວ່າ "ສັນຍາ" ໃສ່ຂອບເຈ້ຍຂ້າງຂໍ້ນັ້ນໃນພະຄຳພີແລະເອົາສໍສີຟ້າເຮັດເສັ້ນ ອ້ອມຂໍ້ນັ້ນດ້ວຍເພື່ອຈະຫາໄດ້ງ່າຍ. |

**48** ກ. ມີບາດກ້າວສອງປະການໃດເພື່ອໃຫ້ເຮົາຊະນະຕໍ່ຄວາມເສົ້າໃຈເມື່ອມີຄົນຕໍ່ສູ້ພະຄຳຂອງພະເຈົ້າ ເລື່ອງອາ ນາຈັກ? ________________________________________________

________________________________________________________________

ຂ. ພະເຢຊູ ສັນຍາຢ່າງໃດຕໍ່ຜູ້ທີ່ຖືກການກົດຂີ່ຂົ່ມເຫັງ? __________________________

*ກ່ອນປະຊຸມຂ້າງໜ້າ ໃຫ້ທ່ານຮັບພິຈາລະນາເລື່ອງຕໍ່ໄປນີ້: ທ່ານໄດ້ຮຽນຮູ້ຢ່າງໃດຈາກພະຄຳຂອງພະເຢຊູ ເລື່ອງການທົນທຸກທີ່ຖືກກົດຂີ່ຂົ່ມເຫັງ? ຖ້າວ່າເທື່ອໃດທ່ານເຫັນຄົນອື່ນເສົ້າໃຈເພາະການຕໍ່ສູ້ແລະການທໍ້ຖອຍໃຈ ທ່ານຈະໜູນໃຈເຂົາຢ່າງໃດ?*

*(ຈົ່ງຈື່ຕົວຢ່າງທີ່ ພະເຢຊູໜູນໃຈ ໂຢຮັນບັບຕິສະໂຕ ດ້ວຍ)*

*ຢ່າລືມຕອບບົດເສັງໂລດເດີ!*

**ຄຳຕອບ:**

**1** *1. ຮູບ ກ ແລະ ຂ 2. ຮູບ ຄ 3. ຮູບ ງ 4. ຮູບ ຈ*

**2** *ວັນຊະບາໂຕ ເບເອນເຊບູນ ໝາຍສຳຄັນ*

**3** *ກ. ວັນສົບ (ຫຼືວັນຊະບາໂຕ) ຂ. ບໍ່ຄວນເຮັດວຽກ. ຄ. ຢຸດພັກຜ່ອນ*

**4** *ຂໍ້ 2 ແລະ ຂໍ້ 10*

**5** *ຮູບ ກ ເດັດຮວງເຂົາມາກິນ ຮູບ ຂ ຊົງໂຜດຄົນມືລີບ*

**6** *ກ. ກະສັດດາວິດກິນເຂົາຈີ່ທີ່ຖະຫວາຍຕໍ່ ພະເຈົາ*
*ຂ. ທຸກວັນຊະບາໂຕພວກປະໂລຫິດເຄີຍລະເມີດຕໍ່ກົດວັນສະບາໂຕ.*

**7** *ຖ້າແກະຕົກຂຸມໃນວັນຊະບາໂຕ ເຂົາຕ້ອງດຶງຂຶ້ນໃນວັນຊະບາໂຕ.*

**8** *ກ. ເມດຕາ ບູຊາ ຂ. ເກັບພາສີ ຄ. ມັດທາຍ. ງ. ຕົວອັກສອນ ຈ. ຕາຍ ສ. ມີຊີວິດ.*

**9** *ຄ. ຖືກ*

**10** *ຂ້າພະອົງ*

**11** *ວັນຊະບາໂຕ*

**12** *ກ.ຕຶງໄວ້ໄມ້ກາງແຂນ ຂ. ບໍ່ໃຫ້ເປີດເຜີຍພະນາມຂອງພະອົງ.*

**13** *ກ. ຂໍ້ 19 ຂ. ພະເຢຊູ ຄ. ເອຊາຢາ ງ. ບົດ 42:1-4*

**14** *ກ. ຫັກ...ມອດ ຂ. ໂຢຮັນບັບຕິສະໂຕ*

**ຄຳຕອບ (ຕໍ່):**

**15** ກ. ຊະບາໂຕ. ຂ. ຮວງເຂົາ ຄ. ດາວິດ. ງ. ປະໂລຫິດ ຈ. ຟາລິຊາຍ
ສ. ໂຜດຄົນມືລີບ ຊ. ແກະ ຍ. ຊຸມ ດ. ຊະບາໂຕ ຕ. ອັກສອນ
ຖ. ຂ້າ ທ. ຊະບາໂຕ ນ. ຮຸນແຮງ ບ. 42:1-4

**16** ກ. ເພິ່ນຂັບໄລ່ຜີອອກໂດຍໃຊ້ອຳນາດພະຍາມານ (ຫຼືເບເອນເຊບູນ)
ຂ. ພະເຢຊູ ໃຫ້ຄົນມີຜີສິງດີເປັນປົກກະຕິ.

**17** ກ. ອານາຈັກຂອງ ພະເຈົ້າ. ຂ. ຈະແຕກແຍກ.

**18** ສາມເທື່ອ.

**19** ພະວິນຍານຂອງ ພະເຈົ້າ.

**20** ກ. ຜົນສຸດທ້າຍຈະຍິ່ງຮ້າຍກວ່າເກົ່າ. (ຄຳຄ້າຍຄືກັນກໍ່ໄດ້) ຂ. ຮູບ ຄ
ຄ. ດ້ວຍຮັບເອົາພະວິນຍານຂອງ ພະເຈົ້າ ກ່ອນ.

**21** ກ. ພະວິນຍານຂອງ ພະເຈົ້າ ຂ. ບໍ່ ຄ. ຜູ້ທີ່ບໍ່ມີພະວິນຍານປະຈຳ
ງ. ມທ 12:43-45

**22** ກ. ພະວິນຍານ ຂ. ພະວິນຍານຂອງ ພະເຈົ້າ

**23** ກ. ງູ ຂ. ໂຢຮັນບັບຕິສໂຕ ຄ. ມທ 3:7

**24** ກ. ຂ. ແລະ ຈ. ຖືກ

**25** ກ. ຄວາມໝິ່ນປະມາດ ພະວິນຍານ ຂ. ພວກຟາລິຊາຍ
ຄ. ພະຍາມານ (ເບເອນເຊບູນ)

**26** ກ. ຟາລິຊາຍ... ໝາຍສຳຄັນ ຂ. ຢູ່ຫຼັງຄາພະວິຫານ

**27** ໂຢນາ

**28** ກ. ຖືກ

**29** ກ. ໄທເມືອງນີນາເວ. ຂ. ນາງກະສັດຝ່າຍທິດໃຕ້.

**30** ກ. ຕ່າງປະເທດ. ຂ. ນີນາເວ. ຄ. ໂຢນາ ງ. ຊາໂລໂມນ.
ຈ. ຊາໂລໂມນ. ສ. ນາງກະສັດ

**31** ກ. ນາງກະສັດ ຂ. ໄທນີນາເວ ຄ. ນາງກະສັດ ງ. ໄທນີນາເວ
ຈ. ໄທນີນາເວ

**32** ກ. ຊາໂລໂມນ. ຂ.ໂຢນາ.

**33** ຮູບ ງ ໂຢນາ ຮູບ ຈ ນາງກະສັດ

**34** ໂຢນາ

**35** ອັດຊີເລຍ

**36** ກ. ພະວິຫານ. ຄ. ໂຢນາ. ຂ. ຊະບາໂຕ. ງ. ກະສັດຊາໂລໂມນ.

**37** ພະເຈົ້າ.

**ຄຳຕອບ (ຕໍ່):**

**38** *1. ຜູ້ປົກຄອງ* *ມທ 11:1-19*

*2. ປະຊາຊົນ* *ມທ 11:20-30*

*3. ນັກສາດສະໜາ* — *ວັນຊະບາໂຕ*, *ເບເອນເຊບູນ*, *ໝາຍສຳຄັນ* — *ມທ 12:1-45*

*4. ຍາດພີ່ນ້ອງ* *ມທ 12:46-50*

**39** *ກ. ຜູ້ປົກຄອງເມືອງ* *ຂ. ກາເປນາອູມ ໂຂລາຊິນ ເບດຊາອີດາ*

*ຄ. ຟາລິຊາຍ* *ງ. ຂ້າໃຫ້ຕາຍ* *ຈ. ມານດາແລະພວກນ້ອງຊາຍ*

**40** *ພະເຈົ້າ*

**41** *ກ. ເດັກນ້ອຍ.* *ຂ. ອ່ອນສຸພາບ...ຖ່ອມລົງ*

**42** *ເມື່ອເຂົາຕິຕຽນຂົ່ມເຫັງນິນທາວ່າຮ້າຍ.*

**43** *ກ. ອ້ອນວອນແລະຮ້ອງເພງສັນລະເສີນພະເຈົ້າ* *ຂ. ສັນລະເສີນ ພະເຈົ້າ*

**44** *ກ. ສັນລະເສີນ ພະເຈົ້າ* *ຂ. ການຮັບໃຊ້ພະອົງ*

**45** *ກ. ການຮັບໃຊ້* *ຂ. ເໝາະ...ເບົາ*

**46** *ມາຫາ ພະເຢຊູ*

**47** *ຂ. ແລະ ງ. ຖືກ*

**48** *ກ. ສັນລະເສີນ ພະເຈົ້າ ຍິນດີຮັບໃຊ້ພະອົງ* *ຂ. ພະອົງຈະໃຫ້ຮັບຄວາມເຊົາເມື່ອຍ*